# ໂຮງຮຽນວັນອາທິດ

# ວັນອາທິດ ທີ 29 ພຶສຈິກາ 2008 (11-29-2009)

---

## ຮູ້ຈັກທີ່ຈະຖ່ອມຕົວ.

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ຢາໂກໂບ 4:1-17

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?</u>**

ທ່ານຈະຖືກທ້າທາຍໃຫ້ເຫັນຄວາມສຳຄັນໃນການຖ່ອມຕົວແລະລະຖິ້ມຄວາມອວດອີ່ງທະນົງຕົວ ຟື້ນຟູຄວາມສຳພັນທີ່ຂາດຫາຍໄປໃຫ້ກັບມາເປັນປົກກະຕິແລະປັບປຸງຄວາມສັມພັນໃຫ້ດີຂຶ້ນ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ບົດຮຽນນີ້ແມ່ນເວົ້າເຖິງຜົນຂອງຄວາມກົງກັນຂ້າມກັບການອວດອີ່ງທະນົງຕົວ ແລະຜົນດີໃນການຖ່ອມຕົວ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:</u>**

ນິທານສັ້ນທີ່ນິຍົມເອົາມາເປັນອຸທາຫອນສອນເປັນບົດຮຽນກ່ຽວກັບເຣື່ອງຄວາມອວດອີ່ງທະນົງຕົວແລະການຖ່ອມຕົວ. ໂຕເຕົ່າຕ້ອງການຢາກຈະຍ້າຍທີ່ຈາກສະຖານທີ່ເກົ່າໄປບ່ອນໃໝ່ໃນລະຍະເວລາອາກາດໜາວມາທາງພາກໃຕ້. ເຕົ່າໄດ້ຖາມໃຫ້ທ່ານຂາວສອງໂຕເປັນຜູ້ຊ່ວຍ,ໂດຍໃຫ້ທ່ານຂາວຄາບໄມ້ໄວ້ຕົວລະສົ້ນແລະໂຕເຕົ່າເອງຈະເປັນຜູ້ຄາບທາງກາງແລ້ວໃຫ້ທ່ານຂາວທັງສອງພາບິນໄປ. ໃນຂະນະທີ່ບິນຢູ່ໃນທ້ອງຟ້າໄດ້ມີຄົນຫາປາກຸ່ມນຶ່ງເຫັນແລະເຂົາເວົ້າຂຶ້ນວ່າ, “ເບິ່ງແມ, ທ່ານຂາວສອງຕົວນັ້ນຄືສລາດແທ້” ໂຕເຕົ່າອົດທົນຟັງຕໍ່ຄຳທັກທ້ວງແນວນັ້ນບໍ່ໄຫວເພາະທັງໝົດແມ່ນເກີດຈາກຄວາມຄິດຂອງຕົນ ມັນຈຶ່ງອ້າປາກຫວັງຈະຮ້ອງບອກວ່າ,“ມັນແມ່ນຄວາມຄິດ!!!!”ໂຕເຕົ່າກໍຕົກລົງສູ່ພື້ນດິນ. ຢາໂກໂບໄດ້ຊີ້ໃຫ້ຮູ້ວ່າເຮົາຈະໄດ້ຮັບຜົນກະທົບຈາກການອວດອີ່ງທະນົງຕົວແລະການຖ່ອມຕົວ .

### <u>ສຶກສາພຣະຄັມພີ</u>

**1. <u>ການທະນົງຕົວມີຜົນຫຍັງກັບເຮົາ</u>** ຢາໂກໂບ: 4:1-5

ພວກເຮົາມັກຈະມີຄວາມຄິດເຫັນຕາມຄຣິສຕະຈັກສມັຍພຣະຄັມພີໃໝ່ ແຕ່ຢາໂກໂບເວົ້າເຖິງຄຣິສຕະຈັກໃນຍຸກສມັຍຂອງເພິ່ນເຖິງຄວາມສຳຄັນໃນຂໍ້ຂັດແຍ້ງ(v1) ການເຂັ່ນຂ້າກັນ (v2) ການທຳຜິດໃນການຫຼິ້ນຊູ້(v4) ຢາໂກໂບໄດ້ສະແດງອອກເປັນຮູບລັກສະນະໃນການເວົ້າ. ເຖິງຢ່າງໃດກໍຕາມ, ຜູ້ທີ່ອ່ານຈົດໝາຍຂອງເພິ່ນກໍເກີດມີບັນຫາສຳຄັນ ເນື່ອງຈາກຄວາມອວດອີງທະນົງຕົວຂອງພວກເຂົາ.

ຈົ່ງສັງເກດເບິ່ງຄວາມເຫັນແກ່ຕົວແລະຄວາມອວດອົ່ງທະນົງຕົວ ມັນມີຜົນກະທົບຕໍ່ຄວາມສຳພັນທັງສອງຂອງເຮົາເຊັ່ນຄວາມສັມພັນລະຫວ່າງບຸກຄົນແລະຄວາມສັມພັນກັບພຣະເຈົ້າ. ໃນຂໍ້ 1-2 ຢາໂກໂບໄດ້ສະແດງໃຫ້ເຫັນສອງວິທີທາງຂອງຄວາມອວດອົ່ງທະນົງຕົວທີ່ມີຜົນກະທົບຕໍ່ຄວາມສັມພັນຂອງເຮົາຕໍ່ບຸກຄົນອື່ນ. ປະການທຳອິດແມ່ນກໍ່ໃຫ້ເກີດການຜິດຖຽງກັນ, ທ່ານຕໍ່ສູ້ແລະທະເລາະວິວາດກັນ, ເປັນໜ້າເສົ້າໃຈ, ການຜິດຖຽງກັນເຣື່ອງການຮ້ອງເພງໃນບາງຄຣິສຕະຈັກ ຈົນໄດ້ເອີ້ນວ່າ "ສົງຄາມນະມັສການ" ແມ່ນຫຍັງທີ່ເປັນຈຸດດ່າງພ້ອຍທີ່ນຳຄວາມເສື່ອມເສັຽມາສູ່ຄຣິສຕະຈັກຂອງພຣະເຈົ້າ. ສຳລັບຄຣິສຕຽນຖືເອົາຄວາມຜິດຖຽງກັບບຸກຄົນໃດຄົນນຶ່ງຫຼາຍກວ່າການຊອກຫາວິທີທີ່ຈະເຮັດໃຫ້ມີການສ້າງຄວາມສຳພັນຂອງເຂົາກັບພຣະເຈົ້າ! ປະການທີສອງຕໍ່ສູ້ກັບຄົນອື່ນດ້ວຍການກໍ່ໃຫ້ເກີດມີການບາດເຈັບຕໍ່ບຸກຄົນອື່ນ: ຄາດຕະກອນແລະຄວາມປາດຖນາຊົ່ວຕໍ່ຄົນອື່ນ. ເຖິງແມ່ນວ່າການຄາດຕະກອນບໍ່ໄດ້ມີເກີດຂຶ້ນໃນໂບດວິຫານ ແຕ່ເປັນພຶດຕິກັມທີ່ຄິດຊົ່ວຕໍ່ຄົນອື່ນ

ໃນຂໍ້ 2ຂ-4 ໄດ້ອະທິບາຍຄວາມອວດອົ່ງທະນົງຕົວມີຜົນສທ້ອນຢ່າງໃດຕໍ່ການມີຄວາມສັມພັນກັບພຣະເຈົ້າໃນສອງວິທີທາງ. ໃນວິທີທາງທີນຶ່ງຕ້ອງອະທິຖານໄວ້ກ່ອນລ່ວງໜ້າທ່ານບໍ່ໄດ້ຮັບເພາະບໍ່ໄດ້ຂໍ. (1)ໃນບຸກຄົນທີ່ມີຄວາມຍິນດີໃນຕົວເອງຄິດວ່າບໍ່ຕ້ອງການໃຫ້ພຣະເຈົ້າຊ່ວຍ. ລາວກໍບໍ່ຕ່າງໄປຈາກເດັກນ້ອຍຄົນນຶ່ງທີ່ຈະພະຍາຍາມໄຂຂວດຂະໜົມ ເມື່ອຜູ້ເປັນພໍ່ຂອງລາວເຫັນກໍຄິດຕັດສິນໃຈທີ່ຈະຊ່ອຍ ແຕ່ເດັກນັ້ນຮ້ອງອອກມາວ່າ,"ບໍ່!ຂ້ອຍຈະເຮັດເອງ." ສິ່ງໃດທີ່ເປັນຂອງພຣະຣາຊທານທີ່ພິເສດທີ່ພວກເຮົາພາດໄປໂດຍຂາດການອ້ອນວອນອະທິຖານ (2)ຄວາມທະນົງຕົວຍັງເປັນເຫດໃຫ້ຜູ້ອະທິຖານອະທິຖານຜິດ,ຄືໃນເມື່ອເຮົາອະທິຖານນັ້ນ, ມັນເປັນລັກສະນະບິດເບືອນຄວາມຈິງ: ເຈົ້າທັງຫຼາຍຂໍແລະບໍ່ໄດ້ຮັບເພາະພວກເຈົ້າຂໍຜິດເພື່ອຈະເອົາໄປໃຊ້ຕາມກິເລດຕັນຫາຂອງຕົວເອງ (3)ຄວາມອວດອົ່ງທະນົງຕົວເຮັດໃຫ້ຜູ້ອະທິຖານເບິ່ງເຫັນແຕ່ຕົວເອງສຳຄັນກ່ອນຄົນອື່ນໆ. ຜູ້ອະທິຖານຫຼາຍໆທ່ານກໍເຊັ່ນກັນມີຄວາມຕ້ອງການໃຫ້ມີສຸຂະພາບດີແລະຄວາມອຸດົມຮັ່ງມີແລະມີນ້ອຍທີ່ສຸດທີ່ຕ້ອງການເພື່ອໃຫ້ມີຄວາມເຂັ້ມແຂງໃນຄວາມເຊື່ອໃນພຣະເຈົ້າ.

ການຫຼິ້ນຊູ້! ຢາໂກໂບໃດ້ໃຊ້ຄຳເວົ້າທີ່ອ່ອນໂຍນຕໍ່ບຸກຄົນທີ່ບໍ່ມີຄວາມເຊື່ອກໍເພື່ອຜົນປໂຍດອັນດີ. ພຣະຄຳໃນພຣະຄັມພີໄດ້ເຕືອນພວກເຮົາວ່າ ຄຣິສຕະຈັກກໍຄືເຈົ້າສາວທີ່ໃຫ້ຄຳໝັ້ນສັນຍາໃນການແຕ່ງກັບພຣະຄຣິດ (2ໂກລິນໂທ11:2-3) ຜູ້ມີຄວາມພູມໃຈໃນຕົວເອງບໍ່ມີຄວາມເຊື່ອພຣະເຈົ້າ. ຢາໂກໂບໄດ້ຖາມວ່າທ່ານຮູ້ບໍ່ການເປັນມິດຕໍ່ໂລກກໍຄືການເປັນສັດຕຣູຕໍ່ພຣະເຈົ້າ? ດ້ວຍຄຳເວົ້າຄຳນີ້ຢາໂກໂບບໍ່ໄດ້ໝາຍຄວາມເຖິງວັດຖຸຫຼືຄົນ ທ່ານໝາຍເຖິງການບໍ່ຍອມຮັບພຣະເຈົ້າທີ່ເປັນການເປີດເຜີຍຕໍ່ຊຸມຊົນ. ສິ່ງນີ້ກໍແມ່ນໝາກຜົນຂອງຄວາມອວດອົ່ງທະນົງຕົວ ຮັກສິ່ງຂອງໆໂລກກໍເປັນການນຳພາຊີວິດຝ່າຍວິນຍານຕໍ່ສູ້ພຣະເຈົ້າ. ໃນຂໍ້ 5 ມີຄວາມເຂົ້າໃຈໄດ້ຍາກໃນຂໍ້ພຣະຄັມພີທີ່ວ່າບໍ່ໄດ້ອ້າງອີງເຖິງຄຳເວົ້າທີ່ເວົ້າຜ່ານມາ, ແລະນີ້ແມ່ນຂໍ້ພຣະຄຳຈາກພຣະຄັມພີ "ວິນຍານທີ່ພຣະອົງໄດ້ຊົງບັນດານໃຫ້ຢູ່ໃນເຮົາທັງຫຼາຍກໍປາຖນາຢ່າງແຮງກ້າ." ເບິ່ງຄືວ່າຢາໂກໂບບອກໃຫ້ຮູ້ວ່າ ພຣະວິນຍານບໍຣິສຸດສະຖິດຢູ່ນຳບຸກຄົນທີ່ເຊື່ອໃນພຣະເຈົ້າ (ເອເຟໂຊ.1:13-14; ໂຣມ 8:9) ແລະນັ້ນສະແດງໃຫ້ເຫັນວ່າທ່ານມີຄວາມເປັນຫ່ວງເປັນໃຍ ພ້ອມປົກປ້ອງພວກເຮົາບໍ່ໃຫ້ຂາດຄວາມເຊື່ອໃນພຣະເຈົ້າ.

**2. <u>ການຖ່ອມຕົວມີຜົນອັນໃດໃຫ້ແກ່ເຮົາ.</u>** ຢາໂກໂບ: 4:6-12

ທ່ານສຸພາບສະຕຣີທ່ານນຶ່ງສະແດງຄຳຂອບໃຈຕໍ່ສິດຍາພິບານໃນຄຳເທສນາ ສິດຍາພິບານພະຍາຍາມທີ່ຈະຖ່ອມຕົວ, ແລະເວົ້າວ່າ, "ບໍ່ຕ້ອງຂອບໃຈຂ້າພຣະເຈົ້າດອກ,ໃຫ້ຂອບຄຸນອົງພຣະຜູ້ເປັນເຈົ້າພຸ້ນ."ສຸພາບສະຕຣີໄດ້ຕອບຄືນໄປວ່າ, "ແມ່ນແລ້ວ, ຂ້ານ້ອຍຄິດເຊັ່ນນັ້ນເໝືອນກັນ,ແຕ່ມັນບໍ່ໄດ້ເຮັດໃຫ້ຂ້ານ້ອຍຮູ້ສຶກດີຂຶ້ນ. ມັນເປັນການຍາກທີ່ເຮົາຈະຖ່ອມຕົວ ຢາໂກໂບເວົ້າວ່າຕໍ່ການທີ່ຈະຮັບເອົາການຖ່ອມຕົວພວກເຮົາແມ່ນຕ້ອງການພຣະຄຸນຂອງພຣະເຈົ້າ. ຄຳທີ່ວ່າພຣະເຈົ້າຊົງຕໍ່ສູ້ຄົນທີ່ຈອງຫອງແຕ່ຊົງປະທານພຣະຄຸນແກ່ຄົນທີ່ຖ່ອມໃຈລົງ ຈາກພຣະຄັມພີສຸພາສິດ 3:34. ຢາໂກໂບ 4:7-10 ເຮົາໄດ້ພຣະບັນຍັດສິບປະການເພື່ອໃຫ້ເຮົາຖ່ອມຕົວລົງ, ແລະໃນຂໍ້11-12 ຢາໂກໂບໄດ້ເວົ້າຕື່ມອີກວ່າຕໍ່ບັນດາທ່ານທີ່ມີຄວາມເຊື່ອມີຄວາມຖ່ອມຕົວຢ່າໄດ້ເວົ້ານິນທາເຊິ່ງກັນແລະກັນໃນບັນດາອ້າຍນ້ອງໃນພຣະຄຣິດ ຢ່າເວົ້ານິນທາຫຼືກ່າວໂທດໃສ່ພີ່ນ້ອງຂອງຕົນໃນພຣະຄຣິດ. ເປັນຫັຍງ? ເພາະວ່າພຣະເຈົ້າເປັນຜູ້ໃຫ້ຄຳຕັດສິນບໍ່ແມ່ນຕົວເຮົາ.

ເມື່ອເຮົາຖ່ອມຕົວລົງພຣະເຈົ້າຈະຍົກຊູພວກເຮົາຂຶ້ນ, ເມື່ອເຈົ້ານາຍປະຕິເສດສະຖານທີ່ຈອດຣົດທີ່ອຳນວຍຄວາມສະດວກສະບາຍແກ່ລາວ ຫຼືເມື່ອຄຣູສອນຍອມຮັບຄວາມຜິດພາດແລະກ່າວສະແດງຂໍການໃຫ້ອະພັຍຕໍ່ຫ້ອງຮຽນຂອງລາວ. ມັນເປັນການເຮັດໃຫ້ເຮົາໄດ້ຮັບຄວາມຊອບອົກຊອບໃຈໃນຕົວຂອງພວກເພິ່ນ. ພຣະເຢຊູຄຣິດໄດ້ໃຫ້ຕົວຢ່າງອັນດີທີ່ສຸດກັບພວກເຮົາກ່ຽວກັບການຖ່ອມຕົວ, ບໍ່ແມ່ນພຽງແຕ່ເມື່ອເວລາທີ່ພຣະອົງຍັງໃຊ້ຊີວິດຮ່ວມກັບສາວົກຂອງພຣະອົງ ແຕ່ເມື່ອເວລາທີ່ພຣະອົງຊົງວາຍພຣະຊົນເທິງໄມ້ກາງແຂນເພື່ອຄວາມບາບຂອງພວກເຮົາພຣະອົງຍັງໃຫ້ກຳລັງໃຈແລະຄວາມຫວັງແກ່ເຮົາ. ຈົ່ງຕິດຕາມເອົາຕົວຢ່າງຂອງພຣະອົງ.

### 3. <u>ພຣະເຈົ້າມີພຣະປະສົງຫັຍງໃນເຮົາ</u> ຢາໂກໂບ 4:13-17

"ຕໍ່ບຸກຄົນທີ່ຮູ້ການດີທຸກຢ່າງແຕ່ບໍ່ເຮັດກໍເປັນຄວາມບາບ." ຄວາມອວດອົ່ງທະນົງຕົວເຮົາມັກຈະພົບເຫັນຢູ່ໃນການປະຕິບັດຕໍ່ກັນໃນກິດຈະການຂອງໂລກ ຢາໂກໂບກ່າວຕຳໜິຕໍ່ບຸກຄົນທີ່ຊື້ຂາຍຫາກຳໄລທີ່ເວົ້າວ່າ,"ມື້ນີ້ຫຼືມື້ອື່ນເຮົາຈະເຂົ້າໄປໃນເມືອງນັ້ນຫຼືເມືອງນີ້ແລະຈະພັກຢູ່ທີ່ນັ້ນນຶ່ງປີແລະຈະຄ້າຂາຍເອົາກຳໄລ." ບັນຫາບໍ່ໄດ້ຂຶ້ນຢູ່ກັບການວາງແຜນການ ສຸພາສິດໜູນໃຈວ່າຄົນຂີ້ຄ້ານເອີຍ ຈົ່ງເບິ່ງເອົາຊີວິດຂອງມົດ ພວກມັນສະສົມອາຫານໄວ້ໃນລະດູຮ້ອນເພື່ອຕຽມໄວ້ໃນລະດູໜາວ.(ສຸພາສິດ6:6-8 ) ບັນຫາມີຢູ່ວ່າເຮົາບໍ່ໃຫ້ພຣະເຈົ້າມີສ່ວນໃນແຜນການຂອງເຮົາ. ນີ້ກໍເປັນຄວາມຜິດພາດທີ່ຄ້າຍຄືກັນກັບເຣື່ອງເສດຖີໂງ່ໃນຄຳອຸປະມາຂອງອົງພຣະເຢຊູຄຣິດ ຄືຜູ້ທີ່ຄິດວ່າຈະສ້າງເລົ້າຂຶ້ນໃໝ່ແລະໃຫຍ່ກວ່າເກົ່າ ແຕ່ບໍ່ມີແຜນທີ່ຈະສ້າງຊີວິດຂອງຕົວເອງຂຶ້ນໃນອົງພຣະເຢຊູຄຣິດ (ລູກາ 12:20).

ເຈົ້າບໍ່ໄດ້ຮູ້ເຣື່ອງຂອງມື້ອື່ນ ຢາໂກໂບເຕືອນພວກເຮົາວ່າຊີວິດຂອງເຮົາກໍເປັນເໝືອນໝອກທີ່ປາກົດຢູ່ຊົ່ວຄາວແລ້ວກໍຫາຍໄປ ຕລອດເວລາເຮົາຕ້ອງການໃຫ້ພຣະເຈົ້າມີສ່ວນຮ່ວມໃນແຜນການຂອງເຮົາ ເພື່ອວ່າເຮົາຈະໄດ້ເຫັນພຣະເຈົ້າໄວຂຶ້ນເກີນກວ່າທີ່ເຮົາຄາດຄິດໄວ້.

ຢາໂກໂບໄດ້ແນະນຳພວກເຮົາວ່າພວກເຮົາຕ້ອງຍອມຮັບວ່າພຣະເຈົ້າມີສ່ວນຮ່ວມໃນແຜນການຂອງເຮົາໂດຍເວົ້າວ່າ ຖ້າເປັນໄປຕາມນ້ຳພຣະທັຍຂອງພຣະເຈົ້າ ເຖິງແມ່ນວ່າຖ້ອຍຄຳນີ້ເບິ່ງຄືວ່າເປັນຄຳເວົ້າທີ່ເປົ່າແຕ່ຄວາມໝາຍແລ້ວເປັນຄວາມຈິງທີ່ເຮົາຈະຊອກຫາພຣະປະສົງຂອງພຣະເຈົ້າ. ໂປໂລໄດ້ເວົ້າເລື້ອຍໆວ່າຖ້າພຣະເຈົ້າຊົງເຫັນພ້ອມກັບການເດີນທາງຂອງເພິ່ນ (ກິຈການ18:21, 1ໂກຣິນໂທ 4:19, ຟີລິບປອຍ

2:19,24 ) ພຣະເຢຊູໄດ້ສະເດັດໄປຢູ່ຕ່າງຫາກແລະໄດ້ອະທິຖານຕລອດຄືນກ່ອນທີ່ພຣະອົງຈະເອີ້ນເອົາອັຄສາວົກສິບສອງຄົນ. (ລູກາ 6:12-13)

ແຜນການທີ່ປາສຈາກການຊອກຫານ້ຳພຣະທັຍຂອງພຣະເຈົ້າ ແມ່ນແຜນການທີ່ຜິດພາດທີ່ສຸດທີ່ເກີດຈາກການອວດອົ່ງທະນົງຕົວ ເພາະວ່າພວກເຮົາຈະມີຊີວິຢູ່ໂດຍຂາດຈາກພຣະເຈົ້າບໍ່ໄດ້. ຢາໂກໂບເວົ້າວ່າ ການເວົ້າອວດອ້າງກໍແມ່ນບາບ. ພວກເຮົາກໍຄິດຢູ່ຕລອດວ່າມີແຕ່ຄວາມບາບເທົ່ານັ້ນທີ່ເຮົາຈຳໄດ້. ແຕ່ຢາໂກໂບໄດ້ເຕືອນເຮົາວ່າບໍ່ແມ່ນແຕ່ຄວາມບາບເທົ່ານັ້ນທີ່ພຣະເຈົ້າກຳຈັດອອກໄປ ດັ່ງນັ້ນ ຖ້າຜູ້ໃດຮູ້ວ່າອັນໃດເປັນການດີແຕ່ບໍ່ເຮັດຜູ້ນັ້ນຈຶ່ງມີບາບ.

**ບົດຮຽນແຫ່ງຊີວິດ.**

ຄວາມອວດອົ່ງທະນົງຕົວເຮັດໃຫ້ເກີດການຕໍ່ສູ້ກັບຄົນອື່ນແລະເປັນຜົນເສັຽຕໍ່ການມີຄວາມສັມພັນຂອງເຮົາກັບພຣະເຈົ້າ ໂດຍສະເພາະແລ້ວແມ່ນການມີຊີວິດຢູ່ດ້ວຍການອະທິຖານ ແຕ່ເມື່ອເວລາເຮົາຫາກຖ່ອມຕົວເຮົາເອງລົງກ່ອນທີ່ອົງພຣະຜູ້ເປັນເຈົ້າຈະເສັຽພຣະທັຍໃນການກະທຳບາບຂອງເຮົາ ພຣະອົງຈະຊົງຍົກເຮົາຂຶ້ນ. ໃຊ້ຊີວິດຢູ່ໂດຍການຖ່ອມຕົວເປັນບໍ່ເກີດໃຫ້ເຮົາຮູ້ຈັກທີ່ຈະຂອບພຣະຄຸນພຣະເຈົ້າແລະເຮັດໃຫ້ເຮົາມີໃຈກວ້າງຂວາງ ຮັບໃຊ້ຊ່ວຍເຫຼືອຊີວິດຝ່າຍຈິດວິນຍານຕໍ່ຜູ້ທີ່ອ່ອນແອ. ແນ່ນອນທີ່ສຸດການທີ່ເຮົາຈະມີແຜນການອັນໃດອັນນຶ່ງໂດຍມີພຣະເຈົ້າຢູ່ນຳ ພວກເຮົາຕ້ອງຖ່ອມຕົວລົງດ້ວຍໝົດຈິດໝົດໃຈຊອກຫານ້ຳພຣະທັຍຂອງພຣະເຈົ້າ.

ດ້ວຍຄຳຖາມຂໍ້ໃດທີ່ຊ່ວຍທ່ານໃນການແກ້ໄຂບັນຫາໃນການເປັນຄົນທີ່ອວດອົ່ງທະນົງຕົວໄດ້?

- ❖ ທ່ານມີຄວາມຜິດພາດເກີດຂຶ້ນໃນຄວາມສັມພັນກັບຜູ້ໃດຜູ້ນຶ່ງບໍ່? ບຸກຄົນທີ່ຄຸ້ນເຄີຍຢູ່ກັບທ່ານຜູ້ເຊິ່ງຢຸດເວົ້າລົມກັບທ່ານນັ້ນກໍຍັງບໍ່ເວົ້າລົມນຳທ່ານເຊັ່ນເຄີຍບໍ່?
- ❖ ທ່ານໄດ້ສະແດງອາການຄຸ້ນເຄືອງຈິດໃຈຕໍ່ຄຣິສຕະຈັກຂອງທ່ານບໍ່? ທ່ານເປັນຜູ້ຈັບຜິດຫຼືນຳພາສະມາຊິກໃນຄຣິສຕະຈັກເວົ້ານິນທາຜູ້ໃດຜູ້ນຶ່ງທີ່ເປັນສະມາຊິກຂອງຄຣິສຕະຈັກບໍ່? ທ່ານໄດ້ຄັດຄ້ານຕໍ່ແຜນການອັນໃດອັນນຶ່ງຂອງຄຣິສຕະຈັກໃນທີ່ປະຊຸມບໍ່?
- ❖ ທ່ານໄດ້ວາງແຜນທີ່ຈະເຮັດອັນໃດອັນນຶ່ງໂດຍບໍ່ໄດ້ອະທິຖານຂໍການຊົງເຫັນພ້ອມຂອງພຣະເຈົ້າບໍ່?
- ❖ ເມື່ອທ່ານອ້ອນວອນອະທິຖານໃນຫ້ອງຮຽນທັງໝົດແມ່ນເພື່ອຕົວທ່ານເອງເທົ່ານັ້ນບໍ່?
- ❖ ໃນເວລາທີ່ຜ່ານມາເມື່ອໃດທີ່ທ່ານຍອມຮັບວ່າທ່ານໄດ້ເຮັດຜິດ?
- ❖ ໃນເວລາທີ່ຜ່ານມາເມື່ອໃດທີ່ທ່ານມີຄວາມເສົ້າໂສກເສັຽໃຈໃນຄວາມບາບຂອງທ່ານ?

**ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ LLBC.**